ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0037/ກປ
ນະຄອນຫຼວງວຽງຈັນ, ວັນທີ 04 JAN 2024

# ຂໍ້ຕົກລົງ
## ວ່າດ້ວຍ ການສ້າງຕັ້ງ ແລະ ການຄຸ້ມຄອງ ກອງທຶນພັດທະນາຊົນລະປະທານ

- ອີງຕາມ ກົດໝາຍ ວ່າດ້ວຍ ຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຊົນລະປະທານ ສະບັບເລກທີ 3330/ຊປທ, ລົງວັນທີ 12 ຕຸລາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 4171/ຫກ, ລົງວັນທີ 15 ພະຈິກ 2023.

**ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງທຶນພັດທະນາຊົນລະປະທານ ເພື່ອໃຫ້ແຕ່ລະໂຄງການມີບ່ອນອີງໃນການສ້າງຕັ້ງ, ການຄຸ້ມຄອງ ແລະ ນຳໃຊ້ ກອງທຶນພັດທະນາຊົນລະປະທານ ໃຫ້ມີປະສິດທິຜົນ ແນ່ໃສ່ຮັບປະກັນການຈັດຕັ້ງປະຕິບັດ ໃຫ້ມີຄວາມໂປ່ງໃສ ແລະ ກວດສອບໄດ້ ປະກອບສ່ວນເຂົ້າໃນການພັດທະນາ ແລະ ຄຸ້ມຄອງການນຳໃຊ້ຊົນລະປະທານ ໃຫ້ມີຄວາມຍືນຍົງ.

**ມາດຕາ 2 ການສ້າງຕັ້ງ ແລະ ການຄຸ້ມຄອງ ກອງທຶນພັດທະນາຊົນລະປະທານ**

ການສ້າງຕັ້ງ ແລະ ການຄຸ້ມຄອງ ກອງທຶນພັດທະນາຊົນລະປະທານ ແມ່ນການຈັດຕັ້ງຂອງກຸ່ມຜູ້ນຳໃຊ້ນ້ຳ ໂຄງການຊົນລະປະທານໃຫ້ມີກອງທຶນ ເພື່ອຟື້ນຟູ ແລະ ສ້ອມແປງ ໂຄງການຊົນລະປະທານ ເມື່ອມີສະພາບຊຸດໂຊມ, ເປ່ເພ ໃຫ້ຢູ່ໃນສະພາບດີ, ສາມາດນຳໃຊ້ໄດ້ ແລະ ສະໜອງນ້ຳໃຫ້ການຜະລິດ.

ກອງທຶນພັດທະນາຊົນລະປະທານ ຂຽນຫຍໍ້ວ່າ **"ກພຊ"** ແມ່ນກອງທຶນ ຂອງກຸ່ມຜູ້ນຳໃຊ້ນ້ຳໂຄງການຊົນລະປະທານ ທີ່ສ້າງຕັ້ງຂຶ້ນເພື່ອສະສົມທຶນ ຈາກອັດຕາເກັບຄ່ານ້ຳ ນຳຜູ້ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການຊົນລະປະທານ, ການສຳປະທານຄຸ້ມຄອງນຳໃຊ້ໂຄງການ ແລະ ການປະກອບສ່ວນທຶນ ຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເພື່ອນຳໃຊ້ເຂົ້າໃນວຽກງານພັດທະນາຊົນລະປະທານ ໃຫ້ມີປະສິດທິຜົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊົນລະປະທານ** ໝາຍເຖິງ ລະບົບການສະໜອງນ້ຳ ແລະ ການລະບາຍ ເພື່ອການຜະລິດກະສິກຳ ຊຶ່ງປະກອບດ້ວຍ ລະບົບຫົວງານ, ລະບົບຫົດ ປ້ອງກັນແລ້ງ ແລະ ລະບົບລະບາຍປ້ອງກັນນ້ຳຖ້ວມ;

2. **ລະບົບຫົວງານ** ໝາຍເຖິງ ເຂື່ອນ, ອ່າງເກັບນ້ຳຊົນລະປະທານ, ຝາຍນ້ຳລົ້ນ, ທາງລະບາຍນ້ຳລົ້ນ, ຈັກສູບນ້ຳ, ປະຕູນ້ຳ ທີ່ສົ່ງຜ່ານອ່າງຜ່ອນກຳລັງນ້ຳ ສູ່ຄອງເໝືອງແມ່ ແລະ ເຮືອນຈັກໄຟຟ້ານ້ຳຕົກຂະໜາດນ້ອຍ;

3. **ອ່າງເກັບນ້ຳຊົນລະປະທານ** ໝາຍເຖິງ ພື້ນທີ່ເກັບນ້ຳທີ່ເກີດຂຶ້ນຈາກການກໍ່ສ້າງ ຫຼື ດັດແປງຈາກອ່າງນ້ຳທຳມະຊາດ, ເຂື່ອນ, ຝາຍນ້ຳລົ້ນ, ປະຕູນ້ຳ ແລະ ກໍ່ສ້າງໂຄງສ້າງອື່ນໆ ເພື່ອເກັບນ້ຳໄວ້ໃຫ້ແກ່ການຜະລິດກະສິກຳ, ຕ້ານແລ້ງ-ຕ້ານຖ້ວມ, ຄົມມະນາຄົມ, ການທ່ອງທ່ຽວ, ການປະມົງ, ອຸດສາຫະກຳ, ນ້ຳປະປາ ແລະ ຮັບໃຊ້ການດຳລົງຊີວິດຂອງປະຊາຊົນ;

4. **ຝາຍນ້ຳລົ້ນ** ໝາຍເຖິງ ຝາຍທີ່ສ້າງຂຶ້ນຕັ້ນແລວນ້ຳ ຫຼື ສາຍນ້ຳ ເພື່ອຍົກລະດັບໃຫ້ນ້ຳສູງຂຶ້ນ, ໄຫຼລົ້ນສັນຝາຍໄດ້ ຕາມເຕັກນິກການອອກແບບ ແລະ ສາມາດໄຫຼເຂົ້າປະຕູນ້ຳປາກຄອງເໝືອງຕາມຄວາມຕ້ອງການ;

5. **ລະບົບສົ່ງນ້ຳ** ໝາຍເຖິງ ລະບົບຄອງເໝືອງ ແລະ ທໍ່ສົ່ງນ້ຳ ເພື່ອສົ່ງນ້ຳເຂົ້າສູ່ພື້ນທີ່ການຜະລິດ ຊຶ່ງປະກອບມີ ຄອງເໝືອງແມ່, ຄອງເໝືອງຂັ້ນສອງ, ຄອງເໝືອງຂັ້ນສາມ, ຄອງຄັນນາຄູ່ ແລະ ອາຄານຕາມຄອງເໝືອງ;

6. **ປະຕູນ້ຳ** ໝາຍເຖິງ ປະຕູເປີດ-ປິດນ້ຳ ທີ່ສ້າງຂຶ້ນ ເພື່ອຄວບຄຸມປະລິມານການໄຫຼຂອງນ້ຳ ຈາກຫົວງານໄປສູ່ອ່າງຜ່ອນກຳລັງນ້ຳ ແລະ ຄອງເໝືອງແມ່;

7. **ເຂດຊົນລະປະທານ** ໝາຍເຖິງ ຂອບເຂດພື້ນທີ່ດິນຊົນລະປະທານ ຊຶ່ງປະກອບດ້ວຍ ທີ່ດິນຫົວງານ, ອ່າງເກັບນ້ຳ, ລະບົບຄອງເໝືອງ, ລະບົບຄອງລະບາຍ ແລະ ເຂດພື້ນທີ່ດິນ ທີ່ລະບົບຊົນລະປະທານ ສາມາດສະໜອງນ້ຳໄດ້ ຕາມການສຶກສາ, ການສຳຫຼວດ-ອອກແບບ ໂດຍມີຫຼັກເຂດແດນ ກຳນົດໄວ້;

8. **ການກໍ່ສ້າງ ແລະ ຕິດຕັ້ງ** ໝາຍເຖິງ ການກໍ່ສ້າງຫົວງານ, ລະບົບຄອງເໝືອງ ລວມທັງການປະກອບອຸປະກອນຕ່າງໆ ເຊັ່ນ: ຈັກສູບນ້ຳ, ລະບົບໄຟຟ້າ, ເຮືອແພ, ທໍ່ສົ່ງນ້ຳ, ປະຕູນ້ຳ, ການປະກອບແຜ່ນເບຕົງສຳເລັດຮູບຕາມບັນດາຄອງເໝືອງ ແລະ ກິດຈະການອື່ນ ທີ່ພົວພັນກັບກິດຈະການຊົນລະປະທານ;

9. **ການຟື້ນຟູ** ໝາຍເຖິງ ການປັບປຸງ, ແກ້ໄຂສ່ວນທີ່ເປ່ເພ ແລະ ຊຸດໂຊມຂອງສິ່ງທີ່ກໍ່ສ້າງຜ່ານມາ ໃຫ້ຄືນສູ່ສະພາບປົກກະຕິ ແລະ ສາມາດນຳໃຊ້ໄດ້ ພ້ອມທັງຍົກລະດັບໃຫ້ເປັນທັນສະໄໝ ເພື່ອຂະຫຍາຍເນື້ອທີ່ຫົດຕື່ມອີກ;

10. **ການສ້ອມແປງ** ໝາຍເຖິງ ການປັບປຸງ, ດັດແປງ ແກ້ໄຂສ່ວນທີ່ເປ່ເພຈາກການນຳໃຊ້ ແລະ ໄພທຳມະຊາດຂອງສິ່ງກໍ່ສ້າງຊົນລະປະທານ ໃຫ້ກັບຄືນໃຊ້ງານໄດ້ປົກກະຕິ;

11. **ການສ້ອມແປງສຸກເສີນ** ໝາຍເຖິງ ການປັບປຸງ, ແກ້ໄຂສ່ວນທີ່ເປ່ເພ ຫຼື ຊຸດໂຊມ ຂອງສິ່ງກໍ່ສ້າງຜ່ານມາ ເປັນບາງຈຸດ ໃຫ້ຄືນສູ່ສະພາບປົກກະຕິ ສາມາດນຳໃຊ້ໄດ້ ພາຍໃນເວລາ ບໍ່ເກີນໜຶ່ງລະດູການຜະລິດ;

12. **ໄພພິບັດ** ໝາຍເຖິງ ໄພອັນຕະລາຍເກີດຈາກທຳມະຊາດ ແລະ ການກະທຳຂອງມະນຸດ ເປັນຕົ້ນ ລົມພາຍຸພັດ, ໝາກເຫັບຕົກ, ຟ້າຜ່າ, ນ້ຳຖ້ວມ, ໄພແຫ້ງແລ້ງ, ອາກາດໜາວຈັດ, ດິນເຈື່ອນ, ແຜ່ນດິນໄຫວ, ໄຟໄໝ້, ພູເຂົາໄຟລະເບີດ, ສັດຕູພືດ, ພະຍາດລະບາດ ຊຶ່ງໄດ້ເກີດຂຶ້ນ ແລະ ສ້າງຄວາມເສຍຫາຍຕໍ່ຊີວິດ, ຊັບສິນ, ເສດຖະກິດ ແລະ ສິ່ງແວດລ້ອມ;

13. **ພື້ນທີ່ຮັບນ້ຳຊົນລະປະທານ** ໝາຍເຖິງ ພື້ນທີ່ໄດ້ຮັບການສະໜອງນ້ຳໃຫ້ແກ່ການຜະລິດກະສິກຳ.

**ມາດຕາ 4 ຫຼັກການຄຸ້ມຄອງກອງທຶນ**

ວຽກງານຄຸ້ມຄອງກອງທຶນພັດທະນາຊົນລະປະທານ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາ ຂອງຂະແໜງການກະສິກຳ ແລະ ປ່າໄມ້;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ນຳໃຊ້ທຶນຖືກຕ້ອງຕາມເປົ້າໝາຍ, ພາວະວິໄສ ແລະ ຍຸຕິທຳ;
4. ມີລະບົບບັນຊີຢ່າງຈະແຈ້ງ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບກອງທຶນພັດທະນາຊົນລະປະທານ ຢູ່ ສປປ ລາວ.

## ໝວດທີ 2
## ເງື່ອນໄຂ ແລະ ຂັ້ນຕອນການສ້າງຕັ້ງ

**ມາດຕາ 6 ເງື່ອນໄຂການສ້າງຕັ້ງ**

ການສ້າງຕັ້ງກອງທຶນພັດທະນາຊົນລະປະທານ ຕ້ອງແມ່ນໂຄງການຊົນລະປະທານທີ່ກໍ່ສ້າງສຳເລັດ ແລະ ມີການຈັດຕັ້ງ ຂອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກ ເຈົ້າເມືອງ.

ສຳລັບການສ້າງຕັ້ງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ແມ່ນໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 7 ຂັ້ນຕອນກະກຽມ**

ການກະກຽມ ການສ້າງຕັ້ງກອງທຶນພັດທະນາຊົນລະປະທານ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສ້າງແຜນການເຄື່ອນໄຫວ ການສ້າງຕັ້ງກອງທຶນພັດທະນາຊົນລະປະທານ;
2. ສົມທົບກັບອົງການປົກຄອງບ້ານ ແລະ ຄະນະບໍລິຫານງານກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ເພື່ອປຶກສາຫາລື ແລະ ເອກະພາບແຜນການສ້າງຕັ້ງກອງທຶນພັດທະນາຊົນລະປະທານ;
3. ສ້າງ ຮ່າງກົດລະບຽບ ຂອງກອງທຶນພັດທະນາຊົນລະປະທານ;
4. ຈັດຕັ້ງຝຶກອົບຮົມ ກ່ຽວກັບ ວຽກງານການສ້າງຕັ້ງ, ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ ໃຫ້ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ;
5. ສະເໜີເຈົ້າເມືອງ ເພື່ອຂໍອະນຸມັດ ຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະກຳມະການຄຸ້ມຄອງກອງທຶນພັດທະນາຊົນລະປະທານ;
6. ສະເໜີເຈົ້າເມືອງ ເພື່ອຂໍອະນຸມັດ ຂໍ້ຕົກລົງ ວ່າດ້ວຍ ການສ້າງຕັ້ງກອງທຶນພັດທະນາຊົນລະປະທານ.

**ມາດຕາ 8 ຂັ້ນຕອນການສ້າງຕັ້ງ**

ການສ້າງຕັ້ງກອງທຶນພັດທະນາຊົນລະປະທານ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ເຕົ້າໂຮມກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ເພື່ອເຜີຍແຜ່ນິຕິກຳ ແລະ ລະບຽບ ກ່ຽວກັບ ການສ້າງຕັ້ງ ແລະ ຄຸ້ມຄອງ **"ກພຊ"** ໃຫ້ເຂົ້າໃຈເນື້ອໃນ, ຈຸດປະສົງ, ຄວາມສຳຄັນ ແລະ ຫຼັກການຂອງການສ້າງຕັ້ງ;
2. ຈັດກອງປະຊຸມສ້າງຕັ້ງ ເພື່ອຜ່ານຂໍ້ຕົກລົງ ຂອງເຈົ້າເມືອງ ວ່າດ້ວຍ ການອະນຸມັດສ້າງຕັ້ງກອງທຶນພັດທະນາຊົນລະປະທານ, ຄັດເລືອກຄະນະກຳມະການຄຸ້ມຄອງກອງທຶນພັດທະນາຊົນລະປະທານ ແລະ ຮັບຮອງຮ່າງກົດລະບຽບ ຂອງກອງທຶນພັດທະນາຊົນລະປະທານ.

## ໝວດທີ 3
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນພັດທະນາຊົນລະປະທານ

**ມາດຕາ 9 ແຫຼ່ງລາຍຮັບ ຂອງກອງທຶນ**

ແຫຼ່ງລາຍຮັບ ຂອງກອງທຶນພັດທະນາຊົນລະປະທານ ໄດ້ມາ ດັ່ງນີ້:

1. ງົບປະມານຂອງລັດຖະບານປະກອບໃຫ້;
2. ອັດຕາສ່ວນການແບ່ງປັນຄ່ານຳໃຊ້ນ້ຳໂຄງການຊົນລະປະທານແຕ່ລະປະເພດ ທີ່ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;
3. ດອກເບ້ຍເງິນຝາກ **"ກພຊ"** ຈາກທະນາຄານ;
4. ການປະກອບສ່ວນຊ່ວຍເຫຼືອລ້າ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
5. ແຫຼ່ງທຶນອື່ນໆ.

**ມາດຕາ 10 ເປົ້າໝາຍການນຳໃຊ້ກອງທຶນ**

ກອງທຶນພັດທະນາຊົນລະປະທານ ໃຫ້ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການສຳຫຼວດ-ອອກແບບ, ເກັບກຳຂໍ້ມູນພາກສະໜາມ, ການຟື້ນຟູ, ສ້ອມແປງປົກກະຕິ ແລະ ສ້ອມແປງສຸກເສີນ;
2. ສົມທົບທຶນອື່ນ ເພື່ອກໍ່ສ້າງຊົນລະປະທານ;
3. ຈັດກອງປະຊຸມປະຈຳປີ, ຝຶກອົບຮົມ, ສຳມະນາ, ທັດສະນະສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ;
4. ຈັດຊື້ວັດຖຸປະກອນ, ເຄື່ອງກໍ່ສ້າງ ແລະ ສ້ອມແປງທີ່ຈຳເປັນ;
5. ນຳໃຊ້ໃນກິດຈະກຳອື່ນໆ ຕາມການຕົກລົງ ແລະ ເຫັນດີຂອງກອງປະຊຸມຄະນະກຳມະການຄຸ້ມຄອງກອງທຶນ.

**ມາດຕາ 11 ການເປີດບັນຊີ**

ເງິນກອງທຶນພັດທະນາຊົນລະປະທານ ຕ້ອງເປີດບັນຊີເງິນຝາກ ຢູ່ຄັງເງິນແຫ່ງຊາດປະຈຳແຕ່ລະທ້ອງຖິ່ນ ຕາມລະບຽບການ ຂອງກະຊວງການເງິນວາງອອກ ໂດຍແມ່ນ ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ຖືບັນຊີ.

ໃນກໍລະນີ ເປີດບັນຊີເງິນຝາກ ຢູ່ທະນາຄານ ຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມ **"ກພຊ"** ແລະ ຕ້ອງມີສອງ ລາຍເຊັນ ຄື: ລາຍເຊັນ ຂອງປະທານ ແລະ ຮອງປະທານກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ.

**ມາດຕາ 12 ການຖອນ ແລະ ການເບີກຈ່າຍເງິນກອງທຶນ**

ການຖອນເງິນ ອອກຈາກບັນຊີ ກອງທຶນພັດທະນາຊົນລະປະທານ ຕ້ອງປະຕິບັດຕາມແຜນການ ແລະ ແຜນງານການຄຸ້ມຄອງ ແລະ ນຳໃຊ້ຊົນລະປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ແລະ ໃຫ້ຖືກຕ້ອງຕາມລະບຽບຂອງກະຊວງການເງິນ ແລະ ລະບຽບຂອງກອງທຶນພັດທະນາຊົນລະປະທານ ໂດຍແມ່ນຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ເບີກຈ່າຍເງິນກອງທຶນ.

**ການເບີກຈ່າຍເງິນກອງທຶນໃຫ້ປະຕິບັດ ດັ່ງນີ້:**

1. ທຸກໆການເບີກຈ່າຍ ຕ້ອງປະກອບເອກະສານ ແລະ ນິຕິກຳທີ່ກ່ຽວຂ້ອງໃຫ້ຄົບຖ້ວນ, ຖືກຕ້ອງຕາມກົດໝາຍ ແລະ ປະຕິບັດຕາມລະບຽບການນຳໃຊ້ງົບປະມານ ຂອງລັດ ແຕ່ລະໄລຍະ;
2. ປະທານຄະນະກຳມະການຄຸ້ມຄອງກອງທຶນ ຫຼື ຜູ້ມີສິດທີ່ໄດ້ຮັບການມອບໝາຍ ເປັນຜູ້ລົງລາຍເຊັນຂໍ້ຕົກລົງອະນຸມັດການນຳໃຊ້ເງິນກອງທຶນ;
3. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ເບີກຈ່າຍ.

**ມາດຕາ 13 ຂັ້ນຕອນການອະນຸມັດເງິນ**

ຄະນະບໍລິຫານກຸ່ມຜູ້ນຳໃຊ້ນ້ຳ ສະເໜີແຜນປະຈຳເດືອນຂອງຕົນ ບົນພື້ນຖານແຜນປະຈຳປີທີ່ໄດ້ຜ່ານການຮັບຮອງແລ້ວ ເຖິງຄະນະກຳມະການຄຸ້ມຄອງກອງທຶນ ເພື່ອພິຈາລະນາອະນຸມັດ ໂດຍຜ່ານການຢັ້ງຢືນຈາກຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ດັ່ງນີ້:

1. ການສະເໜີດັ່ງກ່າວ ຢູ່ໃນແຜນການປະຈຳປີຂອງ **"ກພຊ"** ທີ່ໄດ້ຜ່ານການຮັບຮອງແລ້ວ ຫຼື ການສະເໜີດັ່ງກ່າວ ມີເຫດຜົນຈຳເປັນດ້ານວິຊາການ ໃຫ້ພິຈາລະນາອະນຸມັດ;

2. ໃນກໍລະນີ ການສະເໜີດັ່ງກ່າວ ບໍ່ຢູ່ໃນແຜນການປະຈຳປີຂອງ **"ກພຊ"** ທີ່ໄດ້ຜ່ານການຮັບຮອງແລ້ວ ຫຼື ບໍ່ສອດຄ່ອງກັບຈຸດປະສົງຂອງການນຳໃຊ້ **"ກພຊ"** ກໍໃຫ້ແຈ້ງຜູ້ສະເໜີຊາບຢ່າງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 14 ການລາຍງານ**

ກອງເລຂາ **"ກພຊ"** ຕ້ອງລາຍງານການເຄື່ອນໄຫວ ປະຈຳໄຕມາດ, ຫົກເດືອນ ແລະ ປະຈຳປີ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານ ການສ້າງຕັ້ງ ແລະ ການຄຸ້ມຄອງກອງທຶນພັດທະນາຊົນລະປະທານ ລວມທັງລາຍຮັບ ແລະ ລາຍຈ່າຍປະຈຳປີ ຕໍ່ ຄະນະກຳມະການຄຸ້ມຄອງ ກອງທຶນພັດທະນາຊົນລະປະທານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 4
## ການນຳໃຊ້ນ້ຳຊົນລະປະທານ

**ມາດຕາ 15 ການນຳໃຊ້ນ້ຳຊົນລະປະທານ**

ການນຳໃຊ້ນ້ຳໂຄງການຊົນລະປະທານ ແມ່ນການບໍລິຫານຈັດການນ້ຳຊົນລະປະທານ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳເປັນຕົ້ນຕໍ ຕາມແຜນການແຈກຢາຍນ້ຳ ຂອງໂຄງການທີ່ໄດ້ຈັດລຽງບຸລິມະສິດ ຄວາມສຳຄັນຂອງການນຳໃຊ້ນ້ຳ, ນອກຈາກນັ້ນ ຈຶ່ງສະໜອງໃຫ້ການຜະລິດນ້ຳປະປາ, ອຸດສາຫະກຳ ເພື່ອການທ່ອງທ່ຽວ ແລະ ຈຸດປະສົງອື່ນ ຕາມເງື່ອນໄຂຕົວຈິງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ນ້ຳຊົນລະປະທານ ຕ້ອງເສຍຄ່ານ້ຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ເວັ້ນເສຍແຕ່ການນຳໃຊ້ນ້ຳ ເພື່ອການຜະລິດກະສິກຳ ທີ່ບໍ່ມີຈຸດປະສົງທາງການຄ້າ ແລະ ຕ້ອງໄດ້ຮັບການເຫັນດີຈາກ ຂະແໜງການກະສິກຳ ແລະ ປ່າໄມ້ ເສຍກ່ອນ.

**ມາດຕາ 16 ການເກັບຄ່ານຳໃຊ້ນ້ຳຊົນລະປະທານ**

ການເກັບຄ່ານຳໃຊ້ນ້ຳຊົນລະປະທານ ແມ່ນນຳໃຊ້ເຂົ້າໃນການຟື້ນຟູ ແລະ ສ້ອມແປງ ໂຄງການຊົນລະປະທານ ໃຫ້ຢູ່ໃນສະພາບດີ, ສາມາດນຳໃຊ້ໄດ້ ເພື່ອຮັບປະກັນການສະໜອງນ້ຳໃຫ້ການຜະລິດໃຫ້ກຸ່ມຜູ້ນຳໃຊ້ນ້ຳ ແລະ ຜູ້ປະກອບການ.

ໜ່ວຍງານຊົນລະປະທານ ເປັນເຈົ້າການ ສົມທົບກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ເພື່ອຂຶ້ນບັນຊີລາຍຊື່ຜູ້ທີ່ນຳໃຊ້ນ້ຳຕົວຈິງ ແລະ ເກັບຄ່ານຳໃຊ້ນ້ຳ ເຂົ້າກອງທຶນພັດທະນາຊົນລະປະທານ.

ການເກັບຄ່ານຳໃຊ້ນ້ຳຊົນລະປະທານ ໃຫ້ປະຕິບັດ ດັ່ງນີ້:

1. **ຂັ້ນກຸ່ມ** ແມ່ນໜ່ວຍງານຊົນລະປະທານ ເປັນເຈົ້າການສົມທົບກັບ ຄະນະກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານທີ່ຮັບຜິດຊອບແຕ່ລະໂຄງການ ເພື່ອຂຶ້ນບັນຊີລາຍຊື່ສະມາຊິກຜູ້ທີ່ນຳໃຊ້ນ້ຳຕົວຈິງ ແລະ ເກັບຄ່ານຳໃຊ້ນ້ຳຕາມບັນຊີລາຍຊື່, ຕາມໃບບິນການນຳໃຊ້ນ້ຳທີ່ກຳນົດໄວ້ ໃຫ້ສຳເລັດກ່ອນທ້າຍເດືອນມັງກອນ ຂອງແຕ່ລະປີ ພ້ອມທັງສະຫຼຸບ ແລະ ຄິດໄລ່ຕາມການແບ່ງປັນ ທີ່ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ເປັນລາຍລັກອັກສອນ ແລະ ແຈ້ງຕໍ່ກອງປະຊຸມວາງແຜນການຜະລິດຂອງກຸ່ມ;

2. **ຂັ້ນເມືອງ** ແມ່ນໜ່ວຍງານຊົນລະປະທານ ທີ່ຮັບຜິດຊອບແຕ່ລະໂຄງການສົມທົບກັບພະແນກການເງິນແຂວງ ແລະ ນະຄອນຫຼວງວຽງຈັນ ກ່ຽວກັບ ສາລະບານບັນຊີງົບປະມານແຫ່ງລັດ ເພື່ອສັງລວມ ແລະ ມອບເງິນເຂົ້າງົບປະມານແຫ່ງລັດ, ມອບເຂົ້າກອງທຶນ, ມອບໃຫ້ບໍລິຫານກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ຕາມການແບ່ງປັນທີ່ກຳນົດໄວ້ໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ບໍ່ໃຫ້ກາຍກາງເດືອນກຸມພາ ຂອງແຕ່ລະປີ ແລະ ສະຫຼຸບລາຍງານໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ຊາບ ພາຍໃນ ສາມສິບ ວັນ ທາງລັດຖະການ;

3. **ຂັ້ນແຂວງ** ແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ສົມທົບກັບຄະນະຮັບຜິດຊອບກອງທຶນ ເພື່ອຕິດຕາມ, ຊຸກຍູ້ປີລະຄັ້ງ ແລະ ກວດກາການເກັບລາຍຮັບ ຂອງເມືອງ, ນະຄອນ ທີ່ມອບເຂົ້າບັນຊີ **“ກພຊ”** ທີ່ເປີດໄວ້ໃນທະນາຄານ ຫຼື ຄັງເງິນແຫ່ງຊາດປະຈຳແຂວງ ແລະ ນະຄອນຫຼວງວຽງຈັນ;

4. **ບຸກຄົນ ແລະ ນິຕິບຸກຄົນ** ທີ່ມີຈຸດປະສົງນຳເອົານ້ຳຊົນລະປະທານໄປໃຊ້ດ້ວຍຕົນເອງ ໃຫ້ສະເໜີຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເພື່ອພິຈາລະນາ.

**ມາດຕາ 17 ອັດຕາການເກັບຄ່ານຳໃຊ້ນ້ຳຊົນລະປະທານ**

ອັດຕາການເກັບຄ່ານຳໃຊ້ນ້ຳຊົນລະປະທານ ແມ່ນໃຫ້ເກັບເປັນເຂົ້າເປືອກ ແລ້ວຄິດໄລ່ເປັນເງິນ ຕາມລາຄາທ້ອງຕະຫຼາດ ຂອງແຕ່ລະປະເພດ ດັ່ງນີ້:

1. **ປະເພດຊົນລະປະທານ ແບບໄຫຼເອງ**

| ລ/ດ | ປະເພດການນຳໃຊ້ | ອັດຕາຄ່ານຳໃຊ້ນ້ຳ (ຕໍ່ເຮັກຕາຕໍ່ປີ) | | | ການແບ່ງປັນຄ່ານຳໃຊ້ນ້ຳ (ສ່ວນຮ້ອຍ) | | |
|---|---|---|---|---|---|---|---|
| | | ປູກເຂົ້າ | ປູກພືດ | ໜອງ ຫຼື ການລ້ຽງສັດນ້ຳ | ມອບເຂົ້າງົບປະມານແຫ່ງລັດ | ມອບເຂົ້າກອງທຶນ | ບໍລິຫານກຸ່ມ |
| 1 | ອ່າງເກັບນ້ຳ, ຝາຍນ້ຳລົ້ນ ແລະ ປະຕູນ້ຳ | 50 ຫາ 150 ກິໂລກຣາມ ເຂົ້າເປືອກ | 50 ຫາ 80 ກິໂລກຣາມ ເຂົ້າເປືອກ | 300 ຫາ 500 ກິໂລກຣາມ ເຂົ້າເປືອກ | 20 | 40 | 40 |

2. **ປະເພດຊົນລະປະທານ ແບບໃຊ້ຈັກສູບນ້ຳ**

| ລ/ດ | ປະເພດການນຳໃຊ້ | ອັດຕາຄ່ານຳໃຊ້ນ້ຳ (ຕໍ່ເຮັກຕາຕໍ່ປີ) | | | ການແບ່ງປັນຄ່ານຳໃຊ້ນ້ຳ (ສ່ວນຮ້ອຍ) | | |
|---|---|---|---|---|---|---|---|
| | | ປູກເຂົ້າ | ປູກພືດ | ໜອງ ຫຼື ການລ້ຽງສັດນ້ຳ | ມອບເຂົ້າງົບປະມານແຫ່ງລັດ | ມອບເຂົ້າກອງທຶນ | ບໍລິຫານກຸ່ມ |
| 1 | ຈັກສູບນ້ຳແລ່ນດ້ວຍໄຟຟ້າ | 100 ຫາ 150 ກິໂລກຣາມ ເຂົ້າເປືອກ | 30 ຫາ 50 ກິໂລກຣາມ ເຂົ້າເປືອກ | 200 ຫາ 400 ກິໂລກຣາມ ເຂົ້າເປືອກ | 10 | 40 | 50 |
| - | ສຳລັບຄ່ານຳໃຊ້ໄຟຟ້າຂອງຈັກສູບນ້ຳ ແມ່ນບໍ່ໄດ້ລວມກັບອັດຕາການເກັບຄ່ານຳໃຊ້ນ້ຳຊົນລະປະທານ ໂດຍໃຫ້ຊຳລະຕາມການນຳໃຊ້ໄຟຟ້າຕົວຈິງ ແລະ ໃຫ້ປະຕິບັດຕາມນະໂຍບາຍຂອງລັດຖະບານ ຫຼື ນະໂຍບາຍສົ່ງເສີມການຜະລິດຂອງແຕ່ລະທ້ອງຖິ່ນ. | | | | | | |

3. **ປະເພດຊົນລະປະທານ ນຳໃຊ້ພະລັງງານແສງຕາເວັນ**

| ລ/ດ | ປະເພດການນຳໃຊ້ | ອັດຕາຄ່ານຳໃຊ້ນ້ຳ (ຕໍ່ເຮັກຕາຕໍ່ປີ) | | | ການແບ່ງປັນຄ່ານຳໃຊ້ນ້ຳ (ສ່ວນຮ້ອຍ) | | |
|---|---|---|---|---|---|---|---|
| | | ປູກເຂົ້າ | ປູກພືດ | ໜອງ ຫຼື ການລ້ຽງສັດນ້ຳ | ມອບເຂົ້າງົບປະມານແຫ່ງລັດ | ມອບເຂົ້າກອງທຶນ | ບໍລິຫານກຸ່ມ |
| 1 | ປ້ຳນ້ຳທີ່ນຳໃຊ້ພະລັງງານແສງຕາເວັນ | 50 ຫາ 100 ກິໂລກຣາມເຂົ້າເປືອກ | 20 ຫາ 50 ກິໂລກຣາມເຂົ້າເປືອກ | 300 ກິໂລກຣາມເຂົ້າເປືອກ | 10 | 40 | 50 |

4. **ສຳລັບການນຳໃຊ້ນ້ຳທາງອ້ອມ ແລະ ການນຳເອົານ້ຳໄປໃຊ້ດ້ວຍຕົນເອງຂອງບຸກຄົນທົ່ວໄປ**

| ລ/ດ | ປະເພດການນຳໃຊ້ | ອັດຕາຄ່ານຳໃຊ້ນ້ຳ (ຕໍ່ເຮັກຕາຕໍ່ປີ) | | | ການແບ່ງປັນຄ່ານຳໃຊ້ນ້ຳ (ສ່ວນຮ້ອຍ) | | |
|---|---|---|---|---|---|---|---|
| | | ປູກເຂົ້າ | ປູກພືດ | ໜອງ ຫຼື ການລ້ຽງສັດນ້ຳ | ມອບເຂົ້າງົບປະມານແຫ່ງລັດ | ມອບເຂົ້າກອງທຶນ | ບໍລິຫານກຸ່ມ |
| 1 | ເນື້ອທີ່ ຮັບນ້ຳທາງອ້ອມ | ການປູກ ຫຼື ການລ້ຽງ ໃຫ້ເສຍ 50% ຂອງແຕ່ລະປະເພດ | | | 20 | 40 | 40 |
| 2 | ການນຳເອົານ້ຳໄປໃຊ້ດ້ວຍຕົນເອງ ຈາກໜ້າອ່າງເກັບນ້ຳ, ຝາຍນ້ຳລົ້ນ, ປະຕູນ້ຳ ແລະ ຄອງເໝືອງ ທີ່ມີຈຸດປະສົງນຳໃຊ້ເຂົ້າໃນວຽກງານຂະແໜງການກະສິກຳ ແລະ ປ່າໄມ້ ທີ່ບໍ່ໄດ້ກຳນົດໄວ້ໃນການອອກແບບໂຄງການເບື້ອງຕົ້ນ | ການໃຊ້ນ້ຳທີ່ບໍ່ໄດ້ໃຊ້ພະລັງງານໃຫ້ເສຍ 100% ຂອງແຕ່ລະປະເພດ | | | 20 | 40 | 40 |
| | | ການດູດເອົານ້ຳທີ່ໃຊ້ພະລັງງານໃດໜຶ່ງໃຫ້ເສຍ 50% ຂອງແຕ່ລະປະເພດ | | | 10 | 40 | 50 |
| 3 | ການນຳເອົານ້ຳໄປໃຊ້ດ້ວຍຕົນເອງ ຈາກໜ້າອ່າງເກັບນ້ຳ, ຝາຍນ້ຳລົ້ນ, ປະຕູນ້ຳ ແລະ ຄອງເໝືອງ ທີ່ມີຈຸດປະສົງນຳໃຊ້ເຂົ້າໃນວຽກງານຂະແໜງການອື່ນ ທີ່ບໍ່ໄດ້ກຳນົດໄວ້ໃນການອອກແບບໂຄງການເບື້ອງຕົ້ນ | ການໃຊ້ນ້ຳທີ່ບໍ່ໃຊ້ພະລັງງານ ໃຫ້ເສຍ 30 ກີບຕໍ່ແມັດກ້ອນ | | | 10 | 40 | 50 |
| | | ການດູດເອົານ້ຳທີ່ໃຊ້ພະລັງງານໃດໜຶ່ງໃຫ້ເສຍ 20 ກີບຕໍ່ແມັດກ້ອນ | | | 10 | 40 | 50 |

ບໍລິມາດນ້ຳຊົນລະປະທານ ທີ່ນຳໃຊ້ປູກເຂົ້າ ແລະ ປູກພືດ ກຳນົດ ດັ່ງນີ້:

1. ປູກເຂົ້ານາປີ 8.000 ຫາ 10.000 ແມັດກ້ອນຕໍ່ເຮັກຕາ;
2. ປູກເຂົ້ານາແຊງ 18.000 ຫາ 20.000 ແມັດກ້ອນຕໍ່ເຮັກຕາ;
3. ປູກພືດເປັນສິນຄ້າລະດູແລ້ງ 3.000 ຫາ 5.000 ແມັດກ້ອນຕໍ່ເຮັກຕາ.

**ມາດຕາ 18 ການຍົກເວັ້ນການເກັບຄ່ານໍາໃຊ້ນໍ້າຊົນລະປະທານ**

ຄ່ານໍາໃຊ້ນໍ້າຊົນລະປະທານ ທີ່ຍົກເວັ້ນການເກັບ ມີ ດັ່ງນີ້:

1. ເນື້ອທີ່ເຮັດການທົດລອງ ຫຼື ສາທິດ ຂອງໂຄງການລົງທຶນ ຂອງລັດຖະບານ;

2. ເນື້ອທີ່ເຮັດການຜະລິດກະສິກໍາ ແລະ ການລ້ຽງສັດນໍ້າ ຖືກເສຍຫາຍຈາກຜົນກະທົບໄພທໍາມະຊາດ, ສັດຕູພືດທໍາລາຍ ແລະ ສັດປ່າທໍາລາຍ ໂດຍຜ່ານການກວດກາ ແລະ ຢັ້ງຢືນຈາກ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ຕາມແຕ່ລະກໍລະນີ ຄື:

1) ເສຍຫາຍ ບໍ່ເກີນ **ຊາວ ສ່ວນຮ້ອຍ** ແມ່ນບໍ່ໃຫ້ຍົກເວັ້ນ;

2) ເສຍຫາຍ ແຕ່ **ຊາວເອັດ ສ່ວນຮ້ອຍ ຫາ ເຈັດສິບ ສ່ວນຮ້ອຍ** ແມ່ນໃຫ້ຍົກເວັ້ນ ຕາມສ່ວນຮ້ອຍຂອງຄວາມເສຍຫາຍ;

3) ເສຍຫາຍ ແຕ່ **ເຈັດສິບເອັດ ສ່ວນຮ້ອຍ** ຂຶ້ນໄປ ແມ່ນໃຫ້ຍົກເວັ້ນ ຮ້ອຍສ່ວນຮ້ອຍ.

**ມາດຕາ 19 ການມອບເງິນເຂົ້າກອງທຶນພັດທະນາຊົນລະປະທານ**

ເງິນທີ່ເກັບໄດ້ຈາກອັດຕາການເກັບຄ່ານໍາໃຊ້ນໍ້າຊົນລະປະທານ ຕາມທີ່ກໍານົດໃນມາດຕາ 17 ຂອງຂໍ້ຕົກລົງສະບັບນີ້ ໃຫ້ຄິດໄລ່ເປັນ ຮ້ອຍສ່ວນຮ້ອຍ ແລ້ວແບ່ງສ່ວນການນໍາໃຊ້ ດັ່ງນີ້:

1. ມອບເຂົ້າກອງທຶນພັດທະນາຊົນລະປະທານ **ແປດສິບ ສ່ວນຮ້ອຍ** ຂອງຈໍານວນທີ່ໄດ້ຮັບ;

2. ມອບໃຫ້ອົງການປົກຄອງຂັ້ນເມືອງ **ສິບຫ້າ ສ່ວນຮ້ອຍ** ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວລົງຊຸກຍູ້ການເກັບເງິນຄ່ານໍາໃຊ້ນໍ້າ, ການລົງສໍາຫຼວດເກັບກໍາຂໍ້ມູນສະພາບກິດຈະການຊົນລະປະທານ ແລະ ຂຶ້ນແຜນຟື້ນຟູ ແລະ ສ້ອມແປງ;

3. ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ **ຫ້າ ສ່ວນຮ້ອຍ** ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງກອງທຶນ.

## ໝວດທີ 5
## ຄະນະຄຸ້ມຄອງກອງທຶນ

**ມາດຕາ 20 ຄະນະຄຸ້ມຄອງກອງທຶນ**

ຄະນະຄຸ້ມຄອງກອງທຶນພັດທະນາຊົນລະປະທານ ປະກອບມີ:

1. ຄະນະກໍາມະການ;
2. ກອງເລຂາ;
3. ກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ.

**ມາດຕາ 21 ຄະນະກໍາມະການຄຸ້ມຄອງກອງທຶນ**

ຄະນະກໍາມະການຄຸ້ມຄອງ **"ກພຊ"** ແມ່ນການຈັດຕັ້ງສູງສຸດຂອງກອງທຶນພັດທະນາຊົນລະປະທານ, ຮັບຜິດຊອບເຄື່ອນໄຫວວຽກງານສ້າງຕັ້ງ ແລະ ຄຸ້ມຄອງກອງທຶນ.

ຄະນະກໍາມະການຄຸ້ມຄອງ **"ກພຊ"** ເປັນການຈັດຕັ້ງທີ່ບໍ່ປະຈໍາການ, ບໍ່ມີເງິນອຸດໜູນ ມີພາລະບົດບາດໃນການຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ **"ກພຊ"** ໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ, ຖືກຕ້ອງຕາມ ກົດໝາຍ, ລະບຽບການ ແລະ ເກີດປະໂຫຍດສູງສຸດ.

ຮອງຄະນະກໍາມະການຄຸ້ມຄອງກອງທຶນ **"ກພຊ"** ເປັນຜູ້ພິຈາລະນາ ແລະ ຮັບຮອງ ແຜນການເຄື່ອນໄຫວ, ບົດລາຍງານ, ແຜນລາຍຮັບ-ລາຍຈ່າຍ ແລະ ອະນຸມັດການເບີກຈ່າຍເງິນຂອງ **"ກພຊ"**.

**ຄະນະກຳມະການຄຸ້ມຄອງ "ກພຊ" ປະກອບດ້ວຍ:**

1. ທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ຜູ້ຊີ້ນຳວຽກງານເສດຖະກິດ ເປັນຫົວໜ້າ;
2. ທ່ານ ຮອງເຈົ້າເມືອງ, ຮອງເຈົ້ານະຄອນ ຜູ້ຊີ້ນຳວຽກງານເສດຖະກິດ ເປັນຮອງ;
3. ທ່ານ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຄະນະ;
4. ທ່ານ ຮອງຫົວໜ້າ ຫ້ອງການ ການເງິນຂັ້ນເມືອງ ເປັນຄະນະ;
5. ທ່ານ ຮອງຫົວໜ້າ ຫ້ອງວ່າການປົກຄອງຂັ້ນເມືອງ ເປັນຄະນະ;
6. ທ່ານ ຮອງປະທານ ອົງການກວດກາລັດຂັ້ນເມືອງ ເປັນຄະນະ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງກອງທຶນ**

ຄະນະກຳມະການຄຸ້ມຄອງ "**ກພຊ**" ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ "**ກພຊ**";
2. ພິຈາລະນາ ແລະ ຮັບຮອງ ແຜນການເຄື່ອນໄຫວ, ບົດລາຍງານ, ແຜນລາຍຮັບ-ລາຍຈ່າຍ ຂອງ "**ກພຊ**";
3. ແຕ່ງຕັ້ງກອງເລຂາ "**ກພຊ**";
4. ລະດົມຂົນຂວາຍທຶນ ຈາກ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
5. ພິຈາລະນາ ແລະ ແກ້ໄຂຂໍ້ສະເໜີ ກ່ຽວກັບ ການຄຸ້ມຄອງ ແລະ ການນຳໃຊ້ "**ກພຊ**";
6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ການນຳໃຊ້ "**ກພຊ**" ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
7. ຊີ້ນຳ, ຊຸກຍູ້ ການເກັບລາຍຮັບ ແລະ ການຄຸ້ມຄອງລາຍຈ່າຍ ຂອງ "**ກພຊ**";
8. ຕິດຕາມ ແລະ ກວດກາ ການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິພາບ;
9. ປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານ ຂອງ "**ກພຊ**";
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 23 ກອງປະຊຸມຄະນະກຳມະການຄຸ້ມຄອງກອງທຶນ**

ກອງປະຊຸມຄະນະກຳມະການຄຸ້ມຄອງກອງທຶນ ປະກອບດ້ວຍ:

1. ກອງປະຊຸມສະໄໝສາມັນ ຈັດຂຶ້ນໃນເດືອນ ພະຈິກ ຂອງປີ ເພື່ອສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານໃນໄລຍະ ໜຶ່ງປີ ຜ່ານມາ ແລະ ພິຈາລະນາຮັບຮອງແຜນລາຍຮັບ-ລາຍຈ່າຍ ຂອງກອງທຶນ, ແຜນການຟື້ນຟູ, ສ້ອມແປງລະບົບຊົນລະປະທານ;
2. ກອງປະຊຸມວິສາມັນ ແມ່ນເປີດຂຶ້ນໄດ້ທຸກເວລາ ຕາມຄວາມຮຽກຮ້ອງຂອງວຽກງານ ເປັນຕົ້ນແມ່ນ ການຕົກລົງຮັບຮອງອະນຸມັດແຜນການຟື້ນຟູ ແລະ ສ້ອມແປງຊົນລະປະທານແບບສຸກເສີນ ເພື່ອສະໜອງນ້ຳໃຫ້ການຜະລິດກະສິກຳ ສາມາດດຳເນີນໄດ້ຢ່າງເປັນປົກກະຕິ ແລະ ບໍ່ເກີດຜົນເສຍຫາຍຕໍ່ເນື້ອທີ່ການຜະລິດ ຂອງຊາວກະສິກອນ.

ກອງປະຊຸມ ຈະເປີດໄດ້ກໍຕໍ່ເມື່ອມີສະມາຊິກເຂົ້າຮ່ວມ ຢ່າງໜ້ອຍ ສອງສ່ວນສາມ ຂຶ້ນໄປ ຂອງຈຳນວນສະມາຊິກທັງໝົດ.

**ມາດຕາ 24 ກອງເລຂາ ຄະນະກຳມະການຄຸ້ມຄອງກອງທຶນ**

ກອງເລຂາ ຄະນະກຳມະການຄຸ້ມຄອງ "**ກພຊ**" ແມ່ນການຈັດຕັ້ງທີ່ປະຈຳການ, ມີຫ້ອງການຊ່ວຍວຽກຢູ່ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ໂດຍແມ່ນໜ່ວຍງານຊົນລະປະທານເປັນກອງເລຂາ ເຮັດໜ້າທີ່ເປັນເສນາທິການໃຫ້ຄະນະກຳມະການຄຸ້ມຄອງ "**ກພຊ**" ຂັ້ນຂອງຕົນ.

**ກອງເລຂາ ຄະນະກໍາມະການຄຸ້ມຄອງ "ກພຊ" ປະກອບດ້ວຍ:**

1. ທ່ານ ຮອງຫົວໜ້າ ຫ້ອງການກະສິກໍາ ແລະ ປ່າໄມ້ຂັ້ນເມືອງ ເປັນຫົວໜ້າ;
2. ທ່ານ ຫົວໜ້າ ໜ່ວຍງານຊົນລະປະທານ ເປັນຮອງ;
3. ທ່ານ ຫົວໜ້າ ໜ່ວຍງານ ຫ້ອງການ ການເງິນ ເປັນຄະນະ;
4. ທ່ານ ນາຍບ້ານ ເປັນຄະນະ;
5. ທ່ານ ປະທານກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ເປັນຄະນະ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງກອງເລຂາ**

ກອງເລຂາ ຄະນະກໍາມະການຄຸ້ມຄອງກອງທຶນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ **"ກພຊ"**;
2. ຄົ້ນຄວ້າ ແລະ ສ້າງລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ນໍາໃຊ້ກອງທຶນ;
3. ສ້າງແຜນການເຄື່ອນໄຫວ, ຝຶກອົບຮົມ, ທັດສະນະສຶກສາ, ແຜນລາຍຮັບ-ລາຍຈ່າຍ ແລະ ແຜນແບ່ງປັນງົບປະມານ ປະຈໍາປີ;
4. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກຂອງກອງທຶນ;
5. ເບີກຈ່າຍເງິນ ແລະ ວັດຖຸປະກອນ ຕາມແຜນການທີ່ຄະນະກໍາມະການຄຸ້ມຄອງກອງທຶນ ຮັບຮອງ;
6. ລະດົມຂົນຂວາຍທຶນ ຈາກ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
7. ຕິດຕາມ, ກວດກາ ແລະ ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ການນໍາໃຊ້ **"ກພຊ"** ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
8. ເຂົ້າຮ່ວມຕິດຕາມຄະນະກໍາມະການຄຸ້ມຄອງກອງທຶນ ລົງເຄື່ອນໄຫວ ແລະ ຊຸກຍູ້ວຽກງານຂອງກອງທຶນຢູ່ແຕ່ລະໂຄງການ;
9. ປະສານສົມທົບກັບບັນດາພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານຂອງ **"ກພຊ"**;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກໍາມະການຄຸ້ມຄອງກອງທຶນ.

**ມາດຕາ 26 ກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ**

ກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ແມ່ນການລວມຕົວຂອງຊາວກະສິກອນ ທີ່ສະໝັກໃຈ ເພື່ອເຮັດໜ້າທີ່ໃນການບໍລິຫານຈັດການນໍ້າ ໃຫ້ພື້ນທີ່ຮັບນໍ້າຊົນລະປະທານ ແລະ ບົວລະບັດຮັກສາລະບົບຊົນລະປະທານ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວຂອງ **"ກພຊ"**;
2. ສ້າງຕັ້ງ, ເຄື່ອນໄຫວ ແລະ ນໍາໃຊ້ນໍ້າ ໂຄງການຊົນລະປະທານ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສ້າງຄວາມເສຍຫາຍ, ເຊື່ອມເສຍ, ຕ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງ **"ກພຊ"**;
4. ຫຼົບຫຼີກ, ຊັກຊ້າ, ແກ່ຍາວ ແລະ ເຊື່ອງອໍາ ການເສຍຄ່ານໍ້າຊົນລະປະທານ ແລະ ຄ່າກະແສໄຟຟ້າ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 28 ຂໍ້ຫ້າມສໍາລັບຄະນະຄຸ້ມຄອງ "ກພຊ"**

ຫ້າມ ຄະນະຄຸ້ມຄອງ "**ກພຊ**" ມີພຶດຕິກໍາ ດັ່ງນີ້:

1. ມີພຶດຕິກໍາຕ້ານການຈັດຕັ້ງ ແລະ ການເຄື່ອນໄຫວຂອງ "**ກພຊ**";
2. ປ່ອຍປະລະເລີຍ ການປະຕິບັດໜ້າທີ່ຂອງຕົນຕາມລໍາພັງໃຈ;
3. ປອມແປງເອກະສານທີ່ກ່ຽວຂ້ອງກັບ "**ກພຊ**";
4. ສວຍໃຊ້ສິດ ແລະ ໜ້າທີ່ຕໍາແໜ່ງ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບຂອງ "**ກພຊ**";
5. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການຄຸ້ມຄອງ "**ກພຊ**";
6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 29 ການຄຸ້ມຄອງ ແລະ ກວດກາວຽກງານ ກອງທຶນພັດທະນາຊົນລະປະທານ**

ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມຊົນລະປະທານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານ "**ກພຊ**" ປະກອບດ້ວຍ:

1. ຂັ້ນສູນກາງ ແມ່ນ ກົມຊົນລະປະທານ, ກະຊວງກະສິກໍາ ແລະ ປ່າໄມ້;
2. ຂັ້ນແຂວງ ແມ່ນ ຂະແໜງຊົນລະປະທານ, ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ;
3. ຂັ້ນເມືອງ ແມ່ນ ໜ່ວຍງານຊົນລະປະທານ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ເທດສະບານ ແລະ ນະຄອນ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງກົມຊົນລະປະທານ**

ໃນການຄຸ້ມຄອງວຽກງານ "**ກພຊ**" ກົມຊົນລະປະທານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ຍຸດທະສາດ ແລະ ນິຕິກໍາໃຕ້ກົດໝາຍ ກ່ຽວກັບ ວຽກງານ "**ກພຊ**" ເພື່ອສະເໜີຂັ້ນເທິງ ພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບ "**ກພຊ**" ໃຫ້ເປັນແຜນການ, ແຜນງານ, ໂຄງການ ແລະ ລະບຽບການສະເພາະ ພ້ອມທັງຊີ້ນໍາການຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ "**ກພຊ**" ໃຫ້ກ້ວາງຂວາງ ແລະ ທົ່ວເຖິງ;
4. ຊີ້ນໍາ, ຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານ "**ກພຊ**";
5. ປະສານສົມທົບກັບການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ເພື່ອສົ່ງເສີມການພັດທະນາ "**ກພຊ**" ໃຫ້ເຂັ້ມແຂງ;
6. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ເພື່ອຍົກລະດັບ ແລະ ພັດທະນາ "**ກພຊ**" ໃນຂອບເຂດທົ່ວປະເທດ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ "**ກພຊ**" ໃຫ້ກະຊວງກະສິກໍາ ແລະ ປ່າໄມ້ ຢ່າງເປັນປົກກະຕິ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງຂະແໜງຊົນລະປະທານ**

ໃນການຄຸ້ມຄອງວຽກງານ **"ກພຊ"** ຂະແໜງຊົນລະປະທານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບ **"ກພຊ"**;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ **"ກພຊ"** ພາຍໃນແຂວງ ແລະ ນະຄອນຫຼວງວຽງຈັນ ໃຫ້ກ້ວາງຂວາງ ແລະ ທົ່ວເຖິງ;

3. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຂອງ **"ກພຊ"**;

4. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສົ່ງເສີມການພັດທະນາ **"ກພຊ"** ໃຫ້ເຂັ້ມແຂງ;

5. ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ກຸ່ມຜູ້ນຳໃຊ້ນ້ຳ ກ່ຽວກັບ ວຽກງານຄຸ້ມຄອງນຳໃຊ້ໂຄງການ ຊົນລະປະທານ ແລະ ວຽກງານຂອງກອງທຶນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;

6. ຕິດຕາມ, ຊຸກຍູ້ ໜ່ວຍງານຊົນລະປະທານ ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນ ກ່ຽວກັບ ບັນຊີ ລາຍຊື່ໂຄງການຊົນລະປະທານ ທີ່ໄດ້ສ້າງຕັ້ງກອງທຶນພັດທະນາຊົນລະປະທານ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ **"ກພຊ"** ໃຫ້ກົມຊົນລະປະທານ ແລະ ອົງການ ປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງໜ່ວຍງານຊົນລະປະທານ**

ໃນການຄຸ້ມຄອງວຽກງານ **"ກພຊ"** ໜ່ວຍງານຊົນລະປະທານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບ **"ກພຊ"**;

2. ເຜີຍແຜ່, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ **"ກພຊ"** ໂດຍສົມທົບກັບຫ້ອງການ, ອົງການ ຈັດຕັ້ງ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ຢ່າງປົກກະຕິ;

3. ຝຶກອົບຮົມວຽກງານຄຸ້ມຄອງກອງທຶນ ແລະ ວຽກງານແຜນການ-ການເງິນ ຢ່າງປົກກະຕິ;

4. ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນກ່ຽວກັບ ບັນຊີລາຍຊື່ໂຄງການທີ່ໄດ້ສ້າງຕັ້ງ **"ກພຊ"**;

5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ **"ກພຊ"** ໃຫ້ຂະແໜງຊົນລະປະທານ ແລະ ອົງ ການປົກຄອງເມືອງ ຢ່າງເປັນປົກກະຕິ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33 ການກວດກາ**

ການຈັດຕັ້ງທີ່ຮັບຜິດຊອບໃນການກວດກາ **"ກພຊ"** ປະກອບດ້ວຍ ການກວດກາພາຍໃນ ຊຶ່ງແມ່ນຄະນະ ກຳມະການຄຸ້ມຄອງກອງທຶນ ເປັນຜູ້ດຳເນີນການກວດກາ **"ກພຊ"** ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 21 ຂອງຂໍ້ ຕົກລົງສະບັບນີ້ ແລະ ການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການ ກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາ ຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 34 ເນື້ອໃນການກວດກາ**

ການກວດກາ ການສ້າງຕັ້ງ ແລະ ການຄຸ້ມຄອງ **"ກພຊ"** ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ກົດລະບຽບພາຍໃນ, ແຜນການເຄື່ອນໄຫວ ແລະ ແຜນກິດຈະ ກຳຂອງ **"ກພຊ"**;

2. ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຄະນະຄຸ້ມຄອງ **"ກພຊ"**;
3. ການເກັບເງິນເຂົ້າກອງທຶນ ແລະ ການນຳໃຊ້ງົບປະມານ ຂອງ **"ກພຊ"**.

**ມາດຕາ 35 ການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນ ກ່ຽວກັບ ການສ້າງຕັ້ງ ແລະ ການຄຸ້ມຄອງ **"ກພຊ"** ເປັນຕົ້ນ ຂໍ້ຂັດແຍ່ງພາຍໃນກຸ່ມ, ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ກັບ ຄະນະຄຸ້ມຄອງ **"ກພຊ"** ຫຼື ກັບ ພາກສ່ວນອື່ນ ໃຫ້ດຳເນີນການແກ້ໄຂດ້ວຍຮູບການໄກ່ເກ່ຍ ຫຼື ການປະນີປະນອມ ໂດຍ **"ກພຊ"** ຫຼື ການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການປະກອບສ່ວນຊຸກຍູ້ສົ່ງເສີມ ເຮັດໃຫ້ກອງທຶນມີການເຕີບໃຫຍ່ຂະຫາຍຕົວ, ເຂັ້ມແຂງ ແລະ ຍືນຍົງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຊົນລະປະທານ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 39 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ປອ. ເພັດ ພົມພິພັກ